ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ກຳມາທິການຍຸຕິທຳ

ເລກທີ 109 /ກມຍທ

ນະຄອນຫຼວງວຽງຈັນ, ລົງວັນທີ 6.11.2024

# ໜັງສືສະເໜີ

ຮຽນ : ທ່ານ ປະທານສະພາປະຊາຊົນແຂວງ ຫຼວງພະບາງ ທີ່ນັບຖື.

ເລື່ອງ : ການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງ ນາງ ບຸນທັນ ລັກປະສິດ

- ອີງຕາມ ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 17/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ມະຕິ ຂອງ ຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍ ການຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ສະບັບເລກທີ 07/ຄປຈ, ລົງວັນທີ 09 ມັງກອນ 2023;
- ອີງຕາມ ຄຳຮ້ອງຂໍຄວາມເປັນທຳ ຂອງ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ຕາມຂາເຂົ້າ ສະພາແຫ່ງຊາດ ສະບັບເລກທີ 174/ສພຊ, ລົງວັນທີ 16 ພຶດສະພາ 2022;
- ອີງຕາມ ຜົນກອງປະຊຸມກຳມາທິການຍຸຕິທຳ ຄັ້ງວັນທີ 10 ຕຸລາ 2024.

ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ຂອງ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ກ່ຽວກັບຄະດີແພ່ງ ລະຫວ່າງ: ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ກັບ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ກ່ຽວເລື່ອງ: ທວງເອົາເງິນຄືນ. ຊຶ່ງເລື່ອງດັ່ງກ່າວ ຜ່ານມາຄະນະປະຈຳສະພາແຫ່ງຊາດ ໄດ້ສັ່ງໃຫ້ອົງການໄອຍະການປະຊາຊົນສູງສຸດ ກວດກາຄືນ ຕາມແຈ້ງການ ສະບັບເລກທີ 580/ກມຍທ, ລົງວັນທີ 24 ກັນຍາ 2020 ແຕ່ອົງການໄອຍະການປະຊາຊົນສູງສຸດ ໄດ້ລາຍງານມາຍັງຄະນະປະຈຳສະພາແຫ່ງຊາດ ຢັ້ງຢືນເອົາຕາມຄຳພິພາກສາຂອງສານ ສະບັບເລກທີ 005/ລລ.ພ, ລົງວັນທີ 25 ຕຸລາ 2017. ຜ່ານການກວດກາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຄຳຮ້ອງຂໍຄວາມເປັນທຳແລ້ວ ເຫັນວ່າ ຍັງມີຄວາມຈຳເປັນໃນການເກັບກຳຂໍ້ມູນເພີ່ມເຕີມເພື່ອເປັນບ່ອນອີງໃນການພິຈາລະນາ ຄື: ດັ່ງນີ້:

1. ຂໍ້ມູນການເສຍພາສີທີ່ດິນຂອງ ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ພາຍຫຼັງທີ່ຜູ້ກ່ຽວຊື້ທີ່ດິນຈາກ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ແລ້ວຜູ້ກ່ຽວໄດ້ເສຍພາສີພາສີທີ່ດິນເນື້ອທີ່ເທົ່າໃດ ? ແລະ ການສະເໜີອອກໃບຕາດິນຂອງຜູ້ກ່ຽວແມ່ນສະເໜີໃນຈຳນວນເນື້ອທີ່ເທົ່າໃດ ?;
2. ຂໍ້ມູນການຂາຍທີ່ດິນ ຂອງ ທ້າວ ເພັດຈຳພອນ (ໂຈດ) ຂາຍໃຫ້ແກ່ ທ້າວ ສົມລິດ ເຊັ້ນ (ບຸກຄົນທີສາມ) ແລ້ວໃນລາຄາ 500.000.000 ກີບ ຕາມສັນຍາຊື້-ຂາຍ ສະບັບເລກທີ 28/ນບ.ສຄລ, ລົງວັນທີ 05 ກໍລະກົດ 2018 ຊຶ່ງເຫັນວ່າ: ຈຳນວນເງິນດັ່ງກ່າວ ແມ່ນຂາຍຫຼຸດລາຄາທີ່ຜູ້ກ່ຽວຊື້ທີ່ດິນຈາກ ນາງ ບຸນທັນ (ຈຳເລີຍ) ຖ້າເປັນໄປໄດ້ ຢາກໄດ້ຂໍ້ມູນການໂອນ ຫຼື ຈ່າຍເງິນ ລະຫວ່າງ: ທ້າວ ສົມລິດ ເຊັ້ນ ກັບ ທ້າວ ເພັດຈຳພອນ;
3. ຂໍ້ມູນການອອກໃບແຜນທີ່ດິນ ສະບັບເລກທີ 223, ລົງວັນທີ 0 7ມັງກອນ 2020 ຂອງ ທ້າວ ສົມລິດ ເຊັ້ນ (ບຸກຄົນທີສາມ).

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ຊ່ວຍເກັບກຳຂໍ້ມູນກັບບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ກົດໝາຍ ພາຍຫຼັງເກັບກຳຂໍ້ມູນສຳເລັດແລ້ວໃຫ້ລາຍງານຜົນການເກັບກຳຂໍ້ມູນ ແລະ ນຳສົ່ງເອກະສານທີ່ກ່ຽວຂ້ອງມາຍັງກຳມາທິການຍຸຕິທຳສະພາແຫ່ງຊາດ ໃນເວລາອັນຄວນດ້ວຍ.

**ກຳມາທິການຍຸຕິທຳ**

**ປະທານ**

ກຳມາທິການຍຸຕິທຳ ສະພາແຫ່ງຊາດ

ຣສ. ປອ. ວຽງວິໄລ ທຽງຈັນໄຊ

■ <u>ບ່ອນສົ່ງ</u>:

- ຄະນະປະຈຳສະພາແຫ່ງຊາດ ທ່ານລະ 01 ສະບັບ ເພື່ອຊາບ;
- ເກັບສຳເນົາ 02 ສະບັບ.